ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ

ເລກທີ 0804/ຄພດກ.15

ນະຄອນຫຼວງວຽງຈັນ, ວັນທີ 02 SEP 2015

# ຂໍ້ຕົກລົງ

## ວ່າດ້ວຍການສ້າງສູນຂໍ້ມູນຂ່າວສານ ໃນພື້ນທີ່ຂອງສູນສຳຫຼວດ ແລະ ວາງແຜນນຳໃຊ້ທີ່ດິນກະສິກຳ.

- ອີງຕາມ ບົດບັນທຶກຄວາມເຂົ້າໃຈລະຫວ່າງ ກົມ ຄພດກ ແລະ ອົງການ ບ້ານຈຸດສຸມສາກົນ (VFI) ລົງວັນທີ 9 ມັງກອນ 2015.
- ອີງຕາມ ໃບສະເໜີຂອງ ຫົວໜ້າໂຄງການ Rights-LINK II.ສະບັບລົງວັນທີ 05 ສິງຫາ 2015.
- ອີງຕາມ ການຄົ້ນຄ້ວາເຫັນດີຂອງຄະນະກົມ ຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ.

### ຫົວໜ້າກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ຕົກລົງ:

<u>ມາດຕາ 1:</u> ເຫັນດີອະນຸຍາດໃຫ້ ໂຄງການເຄືອຂ່າຍຂໍ້ມູນຂ່າວສານທີ່ດິນກະສິກຳ (Rights-LINK II), ສ້າງສູນຂໍ້ມູນຂ່າວສານຄຸ້ມຄອງທີ່ດິນກະສິກຳ, ໃນພື້ນທີ່ຂອງສູນສຳຫຼວດ ແລະ ວາງແຜນນຳໃຊ້ທີ່ດິນກະສິກຳ, ເພື່ອໃຫ້ມີຄວາມສາມາດໃນການຕອບສະໜອງຂໍ້ມູນທີ່ມີຄຸນນະພາບໃຫ້ແກ່ຄູ່ຮ່ວມງານຕ່າງໆ.

<u>ມາດຕາ 2:</u> ມອບໃຫ້ ຜູ້ປະສານງານໂຄງການ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງເພື່ອພ້ອມກັນຈັດຕັ້ງປະຕິບັດວຽກງານດັ່ງກ່າວ, ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ ແລະ ລາຍງານໃຫ້ທາງຄະນະກົມຊາບ ເປັນແຕ່ລະໄລຍະ.

- ສຳລັບງົບປະມານໃນການສ້າງສູນຂໍ້ມູນຂ່າວສານດັ່ງກ່າວແມ່ນນຳໃຊ້ງົບປະມານຂອງໂຄງການ Rights-LINK II.

<u>ມາດຕາ 3:</u> ຂໍ້ຕົກລົງສະບັບນີ້ ມີຜົນນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຮັກສາການຫົວໜ້າ ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ

ບ່ອນສົ່ງ:

| | |
|---|---|
| - ອົງການ VFI | 1 ສະບັບ |
| - ຄະນະກົມຜູ້ລະ | 1 ສະບັບ. |
| - ສູນກ່ຽວຂ້ອງ | 1 ສະບັບ |
| - ຜູ້ປະສານງານໂຄງການ | 1 ສະບັບ. |
| - ເກັບມ້ຽນ | 1 ສະບັບ. |

ກະຊວງກະສິກຳ ແລະ ປ່າໄມ້ / ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ

ສີສະຫວ່າງ ວົງທາຈັກ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້
ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ

ເລກທີ 0802/ກພດກ.15
ນະຄອນຫຼວງວຽງຈັນ, ວັນທີ 02 SEP 2015

# ຂໍ້ຕົກລົງ
## ວ່າດ້ວຍການແຕ່ງຕັ້ງ ພະນັກງານຮັບຜິດຊອບ ສູນຂໍ້ມູນຂ່າວສານ ຂອງໂຄງການເຄືອຂ່າຍຂໍ້ມູນຂ່າວສານທີ່ດິນກະສິກຳ.

- ອີງຕາມ ໃບສະເໜີຂອງຫົວໜ້າໂຄງການ Rights-LINK II.ສະບັບລົງວັນທີ 05 ສິງຫາ 2015.
- ອີງຕາມ ໃບສະເໜີຂອງ ພະແນກຄຸ້ມຄອງທີ່ດິນກະສິກຳ ສະບັບເລກທີ 08/ຄດກ, ລົງວັນທີ 27 ສິງຫາ 2015.
- ອີງຕາມ ການຕົກລົງເຫັນດີໃນທີກອງປະຊຸມສ່ອງແສງປະຈຳອາທິດ ຄັ້ງທີ 25 ສິງຫາ 2015.

## ຫົວໜ້າກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ຕົກລົງ:

<u>ມາດຕາ 1:</u> ແຕ່ງຕັ້ງ ພະນັກງານຮັບຜິດຊອບສູນຂໍ້ມູນຂ່າວສານ ຂອງໂຄງການເຄືອຂ່າຍຂໍ້ມູນຂ່າວສານທີ່ດິນກະສິກຳ, ຊຶ່ງມີລາຍຊື່ດັ່ງລຸ່ມນີ້:

1. ທ່ານ ແສງເດືອນ ສີວິໄລ ວິຊາການ ພະແນກຄຸ້ມຄອງທີ່ດິນກະສິກຳ ເປັນຫົວໜ້າ.
2. ທ່ານ ນ, ວິໄລວັນ ເຮີ ວິຊາການ ພະແນກຄຸ້ມຄອງທີ່ດິນກະສິກຳ ເປັນຮອງ.
3. ທ່ານ ນ, ເກດສະໜາ ສຸກສະຫວັນ ວິຊາການ ພະແນກຄຸ້ມຄອງທີ່ດິນກະສິກຳ ເປັນຄະນະ.

<u>ມາດຕາ 2:</u> ມອບໃຫ້ບັນດາທ່ານທີ່ຖືກແຕ່ງຕັ້ງ ໃນມາດຕາ 1, ຈົ່ງຮັບຮູ້ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງເພື່ອພ້ອມກັນຈັດຕັ້ງປະຕິບັດ ວຽກງານດັ່ງກ່າວ, ໃຫ້ໄດ້ຮັບຜົນສຳເລັດເປັນຢ່າງດີ.

<u>ມາດຕາ 3:</u> ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ໄດ້ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຮັກສາການຫົວໜ້າ ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ

ບ່ອນສົ່ງ:
- ຄະນະກົມຜູ້ລະ 1 ສະບັບ.
- ພະແນກ.ສູນ 1 ສະບັບ
- ຜູ້ກ່ຽວຜູ້ລະ 1 ສະບັບ
- ເກັບມ້ຽນ 1 ສະບັບ.

ກະຊວງກະສິກຳ ແລະ ປ່າໄມ້ / ກົມຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ

ສີສະຫວ່າງ ວົງທາຈັກ